# ແບ່ງປັນກ່ຽວກັບເຊື້ອຊາດ ແລະ ຊົນເຜົ່າຂອງທ່ານ ແລະ ຊ່ວຍໃຫ້ພວກເຮົາປັບປຸງການບໍລິການ ແລະ ການເຂົ້າເຖິງ

Securing today and tomorrow



## ທ່ານກຳລັງຮ້ອງຂໍໃຫ້ອອກບັດ Social Security (ປະກັນສັງຄົມ) ໃໝ່ ຫຼື ປ່ຽນໃໝ່ ແມ່ນບໍ?

ການແບ່ງປັນກ່ຽວກັບຂໍ້ມູນເຊື້ອຊາດ ແລະ ຊົນເຜົ່າຂອງທ່ານຊ່ວຍໃຫ້ພວກເຮົາຮູ້ວ່າພວກເຮົາໄດ້ໃຫ້ບໍລິການທີ່ສະເໝີພາບກັບທຸກຄົນທີ່ເຂົ້າມາຂໍຄວາມຊ່ວຍເຫຼືອຈາກພວກເຮົາຫຼືບໍ່. ການໃຫ້ຂໍ້ມູນນີ້ແມ່ນຂຶ້ນກັບຄວາມສະໝັກໃຈ ແລະ ຈະບໍ່ສົ່ງຜົນກະທົບຕໍ່ໃບສະໝັກຂອງທ່ານ.

**ຂອບໃຈ** ສຳລັບການຊ່ວຍໃຫ້ພວກເຮົາປັບປຸງການບໍລິການ ແລະ ການເຂົ້າເຖິງ! ຕົວຢ່າງ ວິທີການທີ່ພວກເຮົານຳໃຊ້ຂໍ້ມູນນີ້ເພື່ອຈຸດປະສົງການຄົ້ນຄວ້າ ແລະ ສະຖິຕິ, ເຂົ້າເບິ່ງທີ່ ***ssa.gov/policy/about/racial-equity-resources.html*** (ມີເປັນພາສາອັງກິດເທົ່ານັ້ນ).

## ຂໍ້ມູນນີ້ຊ່ວຍຂ້າພະເຈົ້າໄດ້ແນວໃດ?

ຂໍ້ມູນນີ້ເປັນສິ່ງສຳຄັນເພື່ອໃຫ້ຮັບປະກັນວ່າພວກເຮົາໄດ້ໃຫ້ການບໍລິການທີ່ຍຸດຕິທຳ ແລະ ສະເໝີພາບກັບທຸກຄົນ. ມັນຍັງຊ່ວຍໃຫ້ພວກເຮົາຂະຫຍາຍການເຂົ້າເຖິງໂຄງການຂອງພວກເຮົາ ແລະ ຊ່ວຍໃຫ້ພວກເຮົາຮູ້:

- ☑ **ຜູ້ທີ່**ກຳລັງໄດ້ຮັບການຊ່ວຍເຫຼືອຈາກການຈ່າຍເງິນຜົນປະໂຫຍດຂອງພວກເຮົານີ້.
- ☑ **ຜູ້ທີ່**ອາດບໍ່ຮັບຮູ້ສິດຜົນປະໂຫຍດທີ່ເຂົາມີສິດໄດ້ຮັບ.
- ☑ **ສິ່ງທີ່**ເປັນສິ່ງກີດຂວາງໂດຍບໍ່ໄດ້ຕັ້ງໃຈທີ່ອາດສົ່ງຜົນກະທົບຕໍ່ຜົນປະໂຫຍດ ແລະ ການບໍລິການ.
- ☑ **ບ່ອນທີ່**ຈະຕ້ອງຂະຫຍາຍຄວາມພະຍາຍາມໃນການເຜີຍແຜ່ ແລະ ເພີ່ມການຮັບຮູ້ກ່ຽວກັບໂຄງການ.

Privacy Act Statement (ຄຳຖະແຫຼງການກ່ຽວກັບບົດບັນຍັດວ່າດ້ວຍຄວາມເປັນສ່ວນຕົວ): ພາກ 702 ຂອງ Social Security Act (ບົດບັນຍັດວ່າດ້ວຍປະກັນສັງຄົມ), ຕາມການປັບປຸງ, ອະນຸຍາດໃຫ້ Social Security (ປະກັນສັງຄົມ) ເກັບກຳຂໍ້ມູນເຊື້ອຊາດ ແລະ ຊົນເຜົ່າ, ທີ່ພວກເຮົາຈະນຳໃຊ້ເພື່ອຈຸດປະສົງໃນການຄົ້ນຄວ້າ ແລະ ສະຖິຕິ. ການໃຫ້ຂໍ້ມູນແມ່ນຂຶ້ນກັບຄວາມສະໝັກໃຈ; ການບໍ່ໃຫ້ຂໍ້ມູນທັງໝົດ ຫຼື ບາງສ່ວນຈະບໍ່ສົ່ງຜົນກະທົບຕໍ່ທ່ານ. ຕາມກົດໝາຍອະນຸຍາດ, Social Security (ປະກັນສັງຄົມ) ອາດຈະໃຊ້ ແລະແບ່ງປັນຂໍ້ມູນທີ່ທ່ານສົ່ງມາ. ພວກເຮົາອາດຈະແບ່ງປັນກັບໜ່ວຍງານຂອງລັດຖະບານກາງອື່ນ, ຜູ້ຮັບເໝົາ, ຜູ້ໃຫ້ທຶນ, ອາສາສະໝັກທີ່ເປັນນັກສຶກສາ ແລະ ພາກສ່ວນອື່ນໆ ດັ່ງທີ່ໄດ້ລະບຸໄວ້ໃນການນຳໃຊ້ປະຈຳໃນ System of Records Notice (ລະບົບການບັນທຶກແຈ້ງການ) (SORN) 60-0104, ມີຢູ່ທີ່ ***www.ssa.gov/privacy*** (ມີເປັນພາສາອັງກິດເທົ່ານັ້ນ).